ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສະຫຼຸບການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ ນັບແຕ່ປີ 2020 ເຖິງປະຈຸບັນ






ໃນຕອນບ່າຍຂອງວັນທີ 07 ມິຖຸນາ 2022 ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອຂຶ້ນ ໂດຍການເປັນປະທານຂອງທ່ານ ນ. ວິນຄຳ ລຸນທອນ ຜູ້ອຳນວຍການໃຫຍ່ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ (ຂສລ) ແລະ ມີບັນດາກົມກ່ຽວຂ້ອງຂອງທະນາຄານແຫ່ງ ສປປ ລາວ, ສະມາຊິກຂອງ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ກໍຄື ທະນາຄານ ແລະ ສະຖາບັນການເງິນຈຸລະພາກ ເຂົ້າຮ່ວມ ເຊິ່ງກອງປະຊຸມດັ່ງກ່າວແມ່ນຈັດຂຶ້ນ 02 ຮູບແບບຄື: ເຂົ້າຮ່ວມກອງປະຊຸມແບບເຊິ່ງໜ້າ ຢູ່ທີ່ສະຖາບັນການທະນາຄານ ແລະ ເຂົ້າຮ່ວມກອງປະຊຸມແບບທາງໄກ (Online) ທັງໝົດ 180 ຄົນ.

ກອງປະຊຸມໃນຄັ້ງນີ້ ແມ່ນຈັດຂຶ້ນເພື່ອສະຫຼຸບການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອນັບແຕ່ປີ 2020 ເຖິງປະຈຸບັນ ແລະ ນຳສະເໜີຜະລິດຕະພັນໃໝ່ຂອງ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ພ້ອມທັງເປັນເວທີໃຫ້ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ, ສະມາຊິກ ແລະ ພາກສ່ວນກ່ຽວຂ້ອງ ໄດ້ແລກປ່ຽນຄຳຄິດຄຳເຫັນ ເພື່ອປັບປຸງວຽກງານຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃຫ້ມີປະສິດທິພາບປະສິດທິຜົນ, ຮັບປະກັນຫຼຸດຜ່ອນຄວາມສ່ຽງທາງດ້ານສິນເຊື່ອຂອງສະຖາບັນການເງິນ, ສົ່ງເສີມການເຂົ້າເຖິງແຫຼ່ງທຶນດ້ວຍຄວາມຍືນຍົງ ແນ່ໃສ່ຮັກສາສະຖຽນລະພາບທາງດ້ານການເງິນ ແລະ ການຈັດຕັ້ງປະຕິບັດນະໂຍບາຍເງິນຕາໃຫ້ມີຄວາມໝັ້ນທ່ຽງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ. ທ່ານ ສີດາ ທັມມະວົງ ຮອງຜູ້ອຳນວຍການບໍລິສັດ ຂສລ ໄດ້ຂຶ້ນລາຍງານສະຫຼຸບການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ ນັບແຕ່ປີ 2020 ເຖິງປະຈຸບັນ ເຊິ່ງທ່ານໄດ້ກ່າວວ່າ ເຖິງບໍລິສັດຈະຖືກສ້າງຕັ້ງຂຶ້ນທ່າມກາງສະພາບເສດຖະກິດປະເຊີນກັບສິ່ງທ້າທາຍຫຼາຍດ້ານ, ມີຄວາມກົດດັນຂອງສາກົນ ລວມເຖິງສະພາບການລະບາດຂອງພະຍາດໂຄວິດ-19 ທີ່ເກີດຂຶ້ນຢູ່ພາຍໃນ ແລະ ສາກົນກໍ່ຕາມ, ພາຍໃຕ້ການຊີ້ນຳ-ນຳພາຢ່າງໃກ້ຊິດ ຈາກຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍ່ຄືຄະນະສະພາບໍລິຫານ ເຮັດໃຫ້ບໍລິສັດ ຂສລ ສາມາດຍາດໄດ້ຜົນສຳເລັດ ດັ່ງນີ້: ໄດ້ສະໜອງການບໍລິການ ຂໍ້ມູນຂ່າວສານສິນເຊື່ອແບບທັນທີ (Online) ໃຫ້ແກ່ສະມາຊິກຢ່າງເປັນປົກກະຕິ ນອກຈາກນັ້ນ, ກໍ່ໄດ້ສະໜອງຂໍ້ມູນຂ່າວສານສິນເຊື່ອໃຫ້ແກ່ພາກລັດ, ບຸກຄົນ, ນິຕິບຸກຄົນ ໃນແຕ່ລະໄລຍະ; ໄດ້ປະຕິບັດການເກັບກຳຂໍ້ມູນຈາກສະມາຊິກຢ່າງເປັນປົກກະຕິ ໂດຍສະມາຊິກນຳສົ່ງຂໍ້ມູນເຂົ້າໃນລະບົບຕາມແບບພິມຂອງລະບົບຂໍ້ມູນຂ່າວສານສິນເຊື່ອກຳນົດ ຊຶ່ງປະຈຸບັນແມ່ນໄດ້ເກັບກຳຂໍ້ມູນຮອດເດືອນ 05 ປີ 2022; ໄດ້ຊຸກຍູ້ບັນດາສະຖາບັນການເງິນທີ່ໄດ້ຮັບອະນຸຍາດສ້າງຕັ້ງຈາກທະນາຄານແຫ່ງ ສປປ ລາວ ເຂົ້າເປັນສະມາຊິກ ມາຮອດປະຈຸບັນ ມີສະມາຊິກຈຳນວນ 169 ແຫ່ງ (ທະນາຄານ 40 ແຫ່ງ, ສະ

ຖາບັນການເງິນຈຸລະພາກ 127 ແຫ່ງ ແລະ ການຈັດຕັ້ງ 2 ແຫ່ງ); ໄດ້ສຳເລັດຄົ້ນຄວ້າສ້າງນິຕິກຳທັງໝົດ ຈຳນວນ 20 ສະບັບ ໃນນີ້ມີ ນິຕິກຳຮັບໃຊ້ວຽກບໍລິຫານພາຍໃນ ຈຳນວນ 11 ສະບັບ ແລະ ນິຕິກຳທີ່ຕິດພັນກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ຈຳນວນ 09 ສະບັບ; ໄດ້ເກັບກຳຂໍ້ມູນການຊົມໃຊ້ໄຟຟ້າເຂົ້າສູ່ລະບົບຂໍ້ມູນຂ່າວສານສິນເຊື່ອ ແລະ ສຳເລັດສ້າງຜະລິດຕະພັນຂໍ້ມູນການຊົມໃຊ້ໄຟຟ້າ ເຊິ່ງໄດ້ປະກາດໃຊ້ໃນເດືອນ ຕຸລາ 2021; ສຳເລັດການຄົ້ນຄວ້າສ້າງຜະລິດຕະພັນຄະແນນສິນເຊື່ອສຳລັບບຸກຄົນ ເຊິ່ງໄດ້ປະກາດນຳໃຊ້ ໃນເດືອນ ພຶດສະພາ 2022.



ຈາກນັ້ນ, ກອງປະຊຸມກໍໄດ້ນຳສະເໜີ ວີດີໂອແນະນຳການເຂົ້າຄົ້ນຫາ 02 ຜະລິດຕະພັນໃໝ່ ຄື ຜະລິດຕະພັນຂໍ້ມູນການຊົມໃຊ້ໄຟຟ້າ ແລະ ຜະລິດຕະພັນຄະແນນສິນເຊື່ອ ສຳລັບບຸກຄົນ ໃຫ້ແກ່ຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບຊົມ ແລະ ໃນຕອນທ້າຍຂອງກອງປະຊຸມ ທ່ານ ນ. ວິນຄຳ ລຸນທອນ ຜູ້ອຳນວຍການໃຫຍ່ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອ ແຫ່ງ ສປປ ລາວ ກໍໄດ້ກ່າວວ່າ: ເຖິງບໍລິສັດຈະຖືກສ້າງຕັ້ງຂຶ້ນມາໃນທ່າມກາງສະພາບການລະບາດຂອງເຊື້ອພະຍາດໂຄວິດ-19 ເຮັດໃຫ້ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານທີ່ພັກ-ລັດ ມອບໝາຍໃຫ້ ກໍ່ຄືການດຳເນີນທຸລະກິດໂດຍສະເພາະການສ້າງຜະລິດຕະພັນໃໝ່: ຜະລິດຕະພັນຂໍ້ມູນການຊົມໃຊ້ໄຟຟ້າ ແລະ ຜະລິດຕະພັນຄະແນນສິນເຊື່ອ ສຳລັບບຸກຄົນ ທີ່ເປັນບາດກ້າວເລີ່ມຕົ້ນເຖິງຈະບໍ່ທັນສົມບູນແບບ ແລະ ບໍ່ທັນໄດ້ມາດຕະຖານຕາມສາກົນ ແຕ່ກໍເປັນການລິເລີ່ມເພື່ອສຶກສາຮຽນຮູ້ ແລະ ປັບປຸງໃນອະນາຄົດ ຄືກັບບົດຮຽນຂອງບັນດາປະເທດໃກ້ຄຽງກໍມີການປັບປຸງໄປໃນແຕ່ລະໄລຍະ ທີ່ຂຶ້ນກັບສະພາບ ແລະ ເງື່ອນໄຂຂອງແຕ່ລະປະເທດ. ສະນັ້ນ, ຄັ້ງນີ້ກໍເປັນການເລີ່ມຕົ້ນຂອງ ສປປ ລາວ ເພື່ອຈະປັບປຸງໃຫ້ມີຄວາມສົມບູນ ແລະ ໄດ້ມາດຕະຖານໃນຕໍ່ໜ້າ ກໍເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ບັນດາສະຖາບັນການເງິນ ນຳໃຊ້ປະກອບເຂົ້າໃນການພິຈາລະນາສິນເຊື່ອ ຂອງຕົນຢ່າງມີປະສິດທິພາບ ແລະ ປະກອບສ່ວນເຂົ້າໃນການສ້າງສະຖຽນລະພາບທາງດ້ານການເງິນຂອງ ສປປ ລາວ. ເຖິງຢ່າງໃດກໍຕາມ, ການປັບປຸງຄຸນນະພາບຂອງຂໍ້ມູນ ແລະ ພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອນັ້ນ ກໍຕ້ອງຮຽກຮ້ອງມາຍັງບັນດາສະມາຊິກ ກໍຄືຜູ້ຮັບຜິດຊອບວຽກງານ ຕ້ອງໄດ້ເອົາໃຈໃສ່ໃນການປະຕິບັດລະບຽບການຕ່າງໆ ເປັນຕົ້ນແມ່ນຕ້ອງໄດ້ເຂົ້າຄົ້ນຫາຂໍ້ມູນຂ່າວສານສິນເຊື່ອກ່ອນການອະນຸມັດເງິນກູ້, ການປັບໂຄງສ້າງໜີ້ ແລະ ອື່ນໆ ພ້ອມທັງເອົາໃຈໃສ່ໃນການນຳສົ່ງຂໍ້ມູນເຂົ້າລະບົບຂໍ້ມູນຂ່າວສານສິນເຊື່ອ ໃຫ້ທັນກຳນົດເວລາ, ມີຄຸນະພາບ ແລະ ຖືກຕ້ອງຕາມແບບພິມລາຍງານທີ່ໄດ້ກຳນົດ ເພື່ອເຮັດໃຫ້ການພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ ເປັນໄປຕາມແຜນການທີ່ໄດ້ວາງໄວ້ຢ່າງມີປະສິດທິພາບ.




#ຂ່າວໂດຍ: ບໍລິສັດຂໍ້ມູນຂ່າວສານສິນເຊື່ອ

#ພາບໂດຍ: ປາໃນ ພັນທະລາ

## ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ